# ສຶກສາສະພາບບັນຫາການຂໍຕຳແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດທະຍົມສົມບູນ ແຂວງ ຈຳປາສັກ

*ບຸນແຕ່ງ ສີສັກ[1], ນວນເພັດ ຄຳພູວົງ[2], ສອນເພັດ ສີສຸລາດ[3], ສົມພຽນ ມະຫາພົນ[4]*

*ພາກວິຊາວິທະຍາສາດການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*

**ບົດຄັດຫຍໍ້**

ການວິໄຈນີ້ເປັນການນຳສະເໜີຜົນການວິໄຈເລື່ອງ: ສຶກສາສະພາບບັນຫາການຂໍຕຳແໜ່ງວິຊາການຄູ ຂອງຄູສອນ ໃນໂຮງຮຽນ ມັດທະຍົມສົມບູນ ແຂວງ ຈຳປາສັກ ໂດຍເປັນການວິໄຈແບບປະລິມານ ມີວັດຖຸປະສົງ: ເພື່ອສຶກສາສະພາບ ບັນຫາການຂໍຕຳແໜ່ງວິຊາການຄູ ຂອງຄູສອນໃນໂຮງຮຽນ ມັດທະຍົມສົມບູນ ແຂວງ ຈຳປາສັກ ວິທີການວິໄຈແບ່ງອອກ ເປັນ 3 ຂັ້ນຕອນ; ຂັ້ນຕອນທີ 1 ສຶກສາແນວຄິດທິດສະດີ ແລະ ງານວິໄຈທີ່ກ່ຽວຂ້ອງ, ຕອນທີ2 ສຶກສາສະພາບບັນຫາ ການຂໍຕຳແໜ່ງຄູວິຊາການຄູຂອງຄູສອນໃນຊັ້ນມັດທະຍົມສົມບູນແຂວງຈຳປາສັກ ຂັ້ນຕອນທີ3 ວິເຄາະຄວາມຄິດເຫັນ ຂອງຄູສອນໃນໂຮງຮຽນມັດທະຍົມສົມບູນສຶກສາແຂວງຈຳປາສັກຕໍ່ສະພາບບັບຫາການຂໍຕຳແໜ່ງວິຊການຄູໂດຍຈຳແນກ ຕາມເພດ, ວຸດທິການສຶກສາ ແລະ ປະສົບການໃນການເຮັດວຽກ,

ກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈຄັ້ງນີ້ຄື:ຄູທີ່ປະຕິບັດໜ້າທີ່ສິດສອນໃນສະຖານການສຶກສາໂຮງຮຽນມັດທະຍົມ ສົມບູນ ແຂວງ ຈຳປາສັກຈຳນວນ 344 ຄົນ ໂດຍການຄຳນວນຈາກສູດຍາມາເນ່(Yamanc.)ຈາກປະຊາກອນທັງ ໝົດ2,481ຄົນ,

ຜົນການສຶກສາສະພາບບັນຫາການຂໍຕຳແໜ່ງວິຊາການຄູຂອງຄູສອນໃນຊັ້ນມັດທະຍົມສົມບູນ ແຂວງ ຈຳປາສັກ ພົບວ່າ: ຜົນການວິເຄາະສະພາບບັນຫາການຂໍຕຳແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດທະຍົມສົມບູນແຂວງຈຳປາ ສັກໂດຍລວມຢູ່ໃນລະດັບໜ້ອຍ

- ຜົນການປຽບທຽບຄວາມຄິດເຫັນຂອງຄູສອນທີ່ມີເພດຕ່າງກັນໂດຍພາບລວມເຫັນວ່າບໍ່ແຕກຕ່າງກັນ,ມີ ພຽງດ້ານແນວຄິດຄຸນສົມບັດມີຄວາມຄິດເຫັນແຕກຕ່າງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້

- ຜົນການປຽບທຽບຄວາມຄິດເຫັນຂອງຄູສອນທີ່ມີວຸດທິການສຶກສາຕ່າງກັນໂດຍລວມເຫັນວ່າ ແຕກຕ່າງກັນ ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ມີພຽງດ້ານວຸດທິການສຶກສາ,ດ້ານແນວຄິດຄຸນສົມບັດ, ດ້ານຜົນງານທາງດ້ານວິຊາການ ບໍ່ແຕກຕ່າງກັນ.

- ຜົນການປຽບທຽບຄວາມຄິດເຫັນຂອງຄູສອນທີ່ມີປະສົບການເຮັດວຽກຕ່າງກັນໂດຍລວມ ແລະ ໃນແຕ່ລະ ດ້ານແມ່ນບໍ່ແຕກຕ່າງກັນເປັນໄປຕາມສົມມຸດຕິຖານທີ່ຕັ້ງໄວ້ຢ່າງມີຄວາມສຳຄັນທາງສະຖິຕິທີ່ດັບ0.05.

**ຄຳສຳຄັນ**: ສະະພາບ, ຕຳແໜ່ງ, ວິຊາການ, ຄູສອນ

[1] *ນັກສຶກສາປະລິນຍາໂທ ສາຂາວິທະຍາສາດການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*

[2] *ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*

[3] *ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*

[4] *ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*

# Department of Education Science, Faculty of Education, Champasak UniversityMrs Bountaeng SESAK

*Faculty of Education, University Champasak*

**Abstract**

This research is a presentation of the results of the research: Studying the situation of applying for teaching positions of teachers in secondary schools in Champasak Province by analyzing the quantity and quality.

Purpose: to study the situation of applying for the position of teachers in secondary schools in Champasak Province. The research method is divided into 3 steps; Step 1 Study the theory and related research, Part 2 Study the situation of the problem of applying for the position of teacher in the secondary level of the province.
Champasak

Step 3 Analyze the opinions of teachers in comprehensive secondary schools in Champasak province regarding the situation of applying for the position of teacher by distinguishing by gender, educational qualifications and work experience,

The sample group used in this research is: teachers who teach in secondary schoolsComplete Champasak Province number of 344 people by calculation from Yamanc. from the total population A total of 2,481 people,

The results of the study of the problem of applying for the teaching position of teachers in the secondary level in the province of ChamPasak found: The result of the analysis of the situation of the teacher's position in secondary schoolsChampasak province as a whole is at a low level.

- The result of comparing the opinions of teachers with different genders by the overview is not different, yesThere are different opinions based on the assumptions made; The result of comparing the opinions of teachers with different educational qualifications as a whole is seen to be different according to the hypothesis set only in terms of educational qualifications, thinking skills, and technical performance are not different; The result of comparing the opinions of teachers with different working experience as a whole and in each aspect is not different according to the hypothesis set with a statistical significance of 0.05.

**Key words:** Status, position, subject, teacher

**1. ພາກສະເໜີ**

ການພັດທະນາທາງດ້ານວິຊາການຂອງສະຖາບັນການສຶກສາ ຈະເກີດຂຶ້ນໄດ້ຕ້ອງໃຫ້ຄວາມສຳຄັນໃນການພັດທະນາຄູ-ອາຈານອັນຈະສົ່ງຜົນໄປສູ່ການຮຽນຮູ້ຂອງຜູ້ຮຽນຜົນທີ່ຕາມມາຄືການເພີ້ມປະສິດທິພາບການຮຽນການສອນໃຫ້ດີຍິ່ງຂຶ້ນ(Guskey,2000; ສິລິສັກດິ ວິສາລາພອນ,2002ໜ້າ5) ຄູ-ອາຈານທີ່ມີຄຸນນະພາບຈະຊ່ວຍແນະໃຫ້ນັກສຶກສາໄດ້ຄິດຢ່າງມີເຫດຜົນ,ມີຄຸນນະທຳຈາລິຍະທຳ,ເປັນແບບຢ່າງທີ່ດີໃນການປະກອບອາຊີບຈຶ່ງກ່າວໄດ້ວ່າ "ຄຸນນະພາບຄູສະທ້ອນຄຸນນະພາບນັກສຶກສາ"(ເພັງຕາຊາລັກ ແລະ ຄຣີສະນາສັກ ຄຳມະນີ, 2002ໜ້າ74).

ໂຮງຮຽນທະຍົມສົມບູນສຶກສາແມ່ນອົງກອນທີ່ໄດ້ຮັບການມອບໝາຍໃຫ້ຄວາມເຊື່ອຖື ແລະ ໄວ້ວາງໃຈຈາກສັງຄົມໃຫ້ປະຕິບັດກິດຈະກຳຫລັກມີ 4 ອົງປະກອບຄື: ການສອນ, ຄົ້ນຄວ້າວິໄຈ,ການບໍລິການທາງວິຊາການແກ່ສັງຄົມ ແລະ ການອະນຸລັກສິນລະປະ ແລະ ວັດທະນະທຳ (ຈາຣາສວັນ ສະຫວັນເວລາ, 2003:197-198 ) ແຕ່ເທົ່າທີ່ຜ່ານມາໂຮງຮຽນມັດທະຍົມສົມບູນຈະເນັ້ນໃນດ້ານການສອນເປັນຫລັກ.ຈະບໍ່ໄດ້ເນັ້ນການສ້າງອົງຄວາມຮູ້ໃໝ່ໃນການຄົ້ນຄວ້າວິໄຈ ຄູ-ອາຈານ ຈຳນວນຫລາຍທີ່ຄິດວ່າການສອນ ແລະ ການສົ່ງຄວາມຮູ້ພຽງຢ່າງດຽວໂດຍໃນພາບລວມມີພຽງຮ້ອຍລະ0.073ຂອງຄູ-ອາຈານທັງໝົດໃນສະຖານການສຶກສາທີ່ເຮັດການຄົ້ນຄວ້າວິໄຈ ( KrayonG sakod Charoenwong Press,2002ໜ້າ24)ດັ່ງນັ້ນ, ຈຶ່ງຕ້ອງມີການກະຕຸກຊຸກຍູ້ໃຫ້ຄູ-ອາຈານສ້າງຄວາມຮູ້ໃໝ່ແລ້ວເອົານຳໄປປະຍຸກໃຊ້ໃນການຈັດການຮຽນ- ການສອນຈຶ່ງຕ້ອງມີການສະໜັບສະໜູນໃຫ້ຄູອາຈາຜະລິດຜົນງານທາງວິຊາການທີ່ມີຄຸນນະພາບສູງ, ອັນຈະສົ່ງຜົນຕໍ່ຕຳແໜ່ງທາງວິຊາກາ (Kerr, 1982; Arends,1994; Charan Panchi,1997:40; Paitrayoo Sonlart 2003ໜ້າ13)

ການສອນ ແລະ ການສ້າງຜົນງານທາງວິຊາການເປັນສິ່ງສຳຄັນຂອງການເຂົ້າເຖິງຕຳແໜ່ງທາງວິຊາການຂອງຄູ-ອາຈານໃນໂຮງຮຽນມັດທະຍົມສົມບູນຈະຕ້ອງໄດ້ຮັບການແກ້ໄຂປັບປຸງໂດຍເລີ້ມຕັ້ງແຕ່ການຈູງໃຈໃຫ້ຄູ-ອາຈານຮັກອາຊີບ ແລະ ມີຈິດສຳນຶກໃນການທຸ້ມເທຄວາມຮູ້, ຄວາມສາມາດໃຊ້ຄວາມມຸ້ງໝັ້ນ, ຄວາມພາກພຽນພະຍາຍາມ ແລະ ມີຄວາມມານະອົດທົນ, ການພັດທະນາຄູ-ອາຈານ,ທັດສະນະຄະຕິ,ຄວາມຮູ້,ຄວາມສາມາດດ້ານການຜະລິດຜົນງານວິຊາການ. ຈຶ່ງເປັນສິ່ງຈຳເປັນຢ່າງຫຍິ່ງຕໍ່ການເຂົ້າສູ່ຕຳແໜ່ງທາງວິຊາການຊຶ່ງເກີດຈາກປັດໄຈທີ່ສຳຄັນ 2ສ່ວນຄື: ປັດໄຈສ່ວນທີໜຶ່ງຄືຕົວຄູ-ອາຈານເອງ,ສ່ວນທີສອງຄືການສະໜັບສະໜູນຂອງຜູ້ບໍລິຫານສະຖານການສຶສາ (Greggerot Phaphithansaham, 1998 ໜ້າ 8).

ຄູໝາຍເຖິງຜູ້ທີ່ສອນນັກຮຽນ ຫຼື ຖ່າຍທອດຄວາມຮູ້ໃຫ້ແກ່ນັກຮຽນ ຄຳວ່າຄູມີຄວາມໝາຍວ່າ "ໜັກ" ມີຄວາມໝາຍເຖິງຄວາມຮັບຜິດຊອບສູງມີພາລະທີ່ຫນັກຫນ່ວງທີ່ສຸດການເປັນ"ຄູ"ຕ້ອງອຸທິດສ່ວນທັງກາຍ ແລະ ຈິດໃຈບໍ່ໜ້ອຍກວ່າພໍ່ແມ່ທີ່ເກີດ,ໃນຊີວິດຂອງຄົນນອກຈາກພໍ່ແມ່ແລ້ວ"ຄູແມ່ນຄົນທຳອິດ" ທີ່ຈະສັ່ງສອນລູກໃຫ້ກາຍ

ເປັນຄົນດີ,ຄົນເກັ່ງເພື່ອພັດທະນາຕົນເອງ, ສັງຄົມ ແລະ ປະເທດຊາດ; ສະນັ້ນ "ຄູ" ຈຶ່ງເປັນບຸກຄົນສຳຄັນທີ່ພວກເຮົາທຸກຄົນຄວນໄດ້ສະແດງຄວາມກະຕັນຍູ,ບົດບາດໜ້າທີ່ ແລະ ຄວາມຮັບຜິດຊອບຂອງຄູໃນວັນນີ້ມີບົດບາດເປັນຜູ້ສ້າງປະເທດຊາດໃນອານາຄົດ. ໂດຍຜ່ານທາງການສຶກສາເຊິ່ງເປັນຜູ້ໃຫຍ່ໃນວັນ

ຂ້າງໜ້າ. ວິຊາຊີບຄູຄວນເປັນວິຊີບຂອງຄົນເກັ່ງ, ຄົນດີໃນສັງຄົມ ແລະ ຜູ້ປະກອບອາຊີບນີ້ຄວນເປັນແບບຢ່າງທາງຄຸນສົມບັດ,ສົນທໍາປະຕິວັດການປະຕິບັດຕົນການດໍາລົງຊີວິດ ແລະ ສາມາດຊີ້ນໍາສັງຄົມໄປທາງທີ່ເໝາະສົມ(Direkphonsima,1998 ໜ້າ1)ເຫັນໄດ້ບົດບາດໜ້າທີ່ຄູມີຄວາມສໍາຄັນຕໍ່ການການພັດທະນາປະເທດຊາດ ນາຍົກລັດຖະມົນຕີແຫ່ງສາທາລະນະລັດປະຊາທິປະໄຕ

ປະຊາຊົນລາວຈິ່ງໄດ້ກໍານົດນະໂຍບາຍ, ລະບຽບວິທີການ ແລະ ມາດຕະຖານຕໍາແໜ່ງວິຊາການຄູໃນລະດັບຕໍ່າກວ່າສະຖາບັນການສຶກສາຊັ້ນສູງໂດຍແນໃສ່ພັດທະນາວິຊາຊີບຄູ, ເຊີດຊູຖານະບົດບາດ ແລະ ກຽດສັກສີຂອງຄູໃຫ້ເປັນທີ່ເຄົາລົບ ແລະ ນັບຖືຂອງສັງຄົມເພື່ອເຮັດໃຫ້ການສິດສອນມີປະສິດທິພາບ ແລະ ການສຶກສາມີຄຸນນະພາບດີຂຶ້ນ. ໂດຍໄດ້ກໍານົດນະໂຍບາຍເງິນອຸດໜູນຕໍາແໜ່ງວິຊາການຄູໃຫ້ຄູຜູ້ທີ່ສິດສອນ ແລະສຶກສາອົບຮົມນັກຮຽນໃນໂຮງຮຽນໃນລະດັບຕໍ່າກວ່າສະຖາບັນການສຶກສາຊັ້ນສູງຂອງລັດຄື: 1)ຄູຊ້ຽວຊານອາວຸດໂສຈະໄດ້ຮັບເງິນວິທະຍາຖານະເທົ່າກັບ100ເປີເຊັນ; 2)ຄູຊ້ຽວຊານຈະໄດ້ຮັບເງິນວິທະຍາຖານະເທົ່າກັບ80ເປີເຊັນ; 3)ຄູຊໍານານການຈະໄດ້ຮັບເງິນອຸໜູນວິທະຍາຖານະເທົ່າກັບ60ເປີເຊັນ;4)ຄູປະສົບການຈະໄດ້ຮັບເງິນອຸດໜູນວິທະຍາຖານະເທົ່າກັບ40ເປີເຊັນຂອງເງິນເດືອນພື້ນຖານ (ກົມຈັດຕັ້ງ ແລະ ພະນັກງານກະຊວງສຶກສາທິການ ແລະ ກິລາ ປີ2007).

ຜ່ານການຈັດຕັ້ງປະຕິບັດດໍາລັດວ່າດ້ວຍຕໍາແໜ່ງວິຊາການຄູໃນລະດັບຕໍ່າກວ່າສະຖາບັນການສຶກສາຊັ້ນສູງສະບັບເລກທີ209/ນຍປີ2008ເຫັນວ່າ:ມີຄູຈໍານວນຫລາຍສົມຄວນທີ່ໄດ້ຮັບກຽດດໍາລົງຕໍາແໜ່ງຄູປະສົບການ ແລະ ອີກຈໍານວນໜຶ່ງໄດ້ຮັບຄູສໍານານງານ ແລະຄູຊ້ຽວຊານແຕ່ກໍປັດສະຈາກບໍ່ໄດ້ບັນຫາຄວາມຫຍຸ້ງຍາກຕ່າງໆເຊັ່ນ: ການກວດກາ,ຕີລາຄາ,ປະເມີນແລະ ຕັດສິນຕໍາແໜ່ງວິຊາການຄູຂອງຄະນະກໍາມະການຂັ້ນຕ່າງໆຍັງເຫັນວ່າຍັງມີຫລາຍບັນຫາບັນຫາຈະຕ້ອງໄດ້ປັບປຸງແກ້ໄຂ, ເຫັນໄດ້ຈາກຜົນການກວດກາຕີລາຄາ ແລະ ປະເມີນຜົນຂອງຄະນະກໍາມະການຮັບຜິດຊອບ, ກວດກາເອກະສານທີ່ກ່ຽວຂ້ອງກັບການສະເໜີຂໍຕໍາແໜ່ງວິຊາການຄູຂອງສອນຢູ່ຂັ້ນໂຮງຮຽນ,ຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນກະຊວງເຫັນວ່າການປະກອບເອກະສານການຂໍຕໍາແໜ່ງວິຊາກຄູຍັງບໍ່ທັນຖືກຕ້ອງ ແລະ ສອດຄ່ອງກັບນິຕິກໍາທີ່ກະຊວງສຶກສາທິການ ແລະ ກິລາກໍານົດອອກໂດຍສະເພາະດ້ານໂຄງສ້າງດ້ານເນື້ອໃນ,ດ້ານຫລັກໄວຍາກອນ, ດ້ານການສ້າງແຟມສະສົມຜົນງານ(ແຜນການສອນ,ບົດສອນ,ເອກະສານປະກອບການສອນບົດຄົ້ນຄວ້າ/ວິໄຈ/ຜະລິດຕະພັນນະວັດຕະກໍາຕ່າງໆທີ່ປະກອບການສອນ) ມາຮອດປະຈຸບັນໃນທົ່ວປະເທດມີຄູສອນໃນຊັ້ນມັດທະຍົມທີ່ໄດ້ຮັບຕໍາແໜ່ງວິຊາການມີຈໍານວນ 226 ຄົນ;ໃນນັ້ນມີຄູສອນຊັ້ນມັດທະຍົມສົມບູນພາກສ່ວນ.

ແຂວງຈໍາປາສັກຈໍານວນ 17 ຄົນ,ເທົ່າກັບ 6,39 ເປີເຊັນ,ຂອງຄູປະສົບການທົ່ວປະເທດ, ຄູສອນໃນຊັ້ນມັດທະຍົມສົມບູນແຂວງຈໍາປາສັກໃນປີ2022ມີຈໍານວນທັງໝົດ 2,481 ຄົນ,ເຊິ່ງມີຄູປະສົບການ17ຄົນ, ເທົ່າກັບ0,66 ເປີເຊັນຂອງຄູສອນມັດທະຍົມໃນທົ່ວແຂວງຈໍາປາສັກ. ສ່ວນຕໍາແໜ່ງຄູຊ່ຽວຊານອາວຸດໂສ, ຄູຊ່ຽວຊານ ແລະ ຄູຊໍານານການແມ່ນຍັງບໍ່ທັນມີຜູ້ໄດ້ຮັບ (ຈາກບົດສະຫລຸບຂອງກົມສາມັນສຶກສາປີ2022)ຈາກເຫດຜົນດັ່ງກ່າວນີ້ຜູ້ວິໄຈຈິ່ງສົນໃຈທີ່ຈະສຶກສະພາບບັນຫາການຂໍຕໍາແໜ່ງວິຊາການ ຂອງຄູສອນໃນຊັ້ນມັດທະຍົມສົມບູນສຶກສາສັງກັດ ແຂວງຈໍາປາສັກ.ເພື່ອຈະນໍາຜົນການສຶກສາໄປເປັນແນວທາງໃນການພັດທະນາຄູເຂົ້າສູ່ຕໍາແໜ່ງທາງວິຊາການພິ່ມຂຶ້ນ.ອັນເປັນການພັດທະນາຄູສູ່ຄວາມກ້າວໜ້າອີກດ້ານໜຶ່ງ, ທັງເປັນການສະໜັບສະໜູນການບໍລິຫານວິຊາການຂອງຄູ

ມັດທະຍົມສົມບູນດ້ານການຄົ້ນຄວ້າວິໄຈ ແລະ ການເຂົ້າສູ່ຕໍາແໜ່ງທາງວິຊາການໃຫ້ສໍາເລັດຜົນ.

**2. ຄໍາຖາມຄົ້ນຄວ້າ**

- ການຂໍຕໍາແໜ່ງວິຊາການຂອງຄູສອນໃນໂຮງຮຽນມັດທະຍົມສົມບູນມີສະພາບບັນຫາຄືແນວໃດ ?

- ຄູສອນໃນໂຮງຮຽນມັດທະຍົມສົມບູນ ແຂວງຈໍາປາສັກ ທີ່ມີເພດ, ວຸດທິການສຶກສາ ແລະ ປະສົບການເຮັດວຽກມີຄວາມຄິດເຫັນຕໍ່ສະພາບບັນຫາການຂໍຕໍາແໜ່ງວິຊາການຄືແນວໃດ?

**3. ຈຸດປະສົງຂອງການວິໄຈ.**

- ສຶກສາສະພາບບັນຫາການຂໍຕໍາແໜ່ງວິຊາການຄູ ຂອງຄູສອນໃນໂຮງຮຽນມັດທະຍົມສົມບູນແຂວງຈໍາປາສັກ.

- ເພື່ອປຽບທຽບຄວາມຄິດເຫັນຂອງຄູສອນໃນໂຮງຮຽນມັດທະຍົມສົມບູນສຶກສາແຂວງຈໍາປາສັກຕໍ່ສະພາບບັນຫາການຂໍຕໍາແໜ່ງວິຊາການຄູໂດຍຈໍາແນກຕາມ ເພດ, ວຸດທິການສຶກສາ ແລະ ປະສົບການໃນການປະຕິບັດວຽກງານ.

**4. ສົມມຸດຖານໃນການວິໄຈ**

ສະພາບການຂໍຕໍາແໜ່ງຄູສອນໃນໂຮງຮຽນມັດທະຍົມສົມບູນ ແຂວງຈໍາປາສັກ ໂດຍຈໍາແນກຕາມເພດ, ວຸດທິການສຶກສາ ແລະ ປະສົບການເຮັດວຽກແມ່ນມີຄວາມແຕກຕ່າງກັນ.

**5. ປະໂຫຍດທີ່ຄາດວ່າຈະໄດ້ຮັບ**

- ຮັບຮູ້ເຖິງສະພາບບັນຫາການຂໍຕໍາແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດທະຍົມສົມບູນແຂວງຈໍາປາສັກ

- ຮັບຮູ້ຄວາມຄິດເຫັນຂອງຄູສອນທີ່ມີເພດ, ວຸດທິການສຶກສາ ແລະ ປະສົບການເຮັດວຽກ ຕໍ່ກັບການຂໍຕໍາ ແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດທະຍົມສົມບູນແຂວງ ຈໍາປາສັກ,

- ຜົນຂອງການຄົ້ນຄວ້ານີ້ຈະເປັນປະໂຫຍດຕໍ່ຜູ້ບໍລິຫານການສຶກສາ ແລະ ຄູສອນເພື່ອນໍາໄປເປັນທິດທາງໃນການຂໍຕໍາແໜ່ງວິຊາການຄູ.

**6. ວິທີການຄົ້ນຄວ້າ**

ການສຶກສາຄັ້ງນີ້ຜູ້ວິໄຈໄດ້ດໍາເນີນການວິໄຈໃນຮູບບແບບປະລິມານ ລາຍລະອຽດຂອງການດໍາເນີນການວິໄຈ ແບ່ງອອກເປັນ 3 ຂັ້ນຕອນດັ່ງນີ້.

**ຂັ້ນຕອນທີ1** ສຶກສາແນວຄິດທິດສະດີງານວິໄຈທີ່ກ່ຽວຂອງ ແລະ ເອກກະສານກ່ຽວກັບມາດຕະຖານການຂໍຕໍາແໜ່ງວິຊາການຄູ.

ເປົ້າໝາຍແມ່ນເພື່ອກໍານົດຈຸດປະສົງ ແລະ ຂອບແນວຄວາມຄິດເພື່ອສ້າງເປັນເຄື່ອງມື(ແບບສອບຖາມ)ໃຫ້ຄອບຄຸມກັບຈຸດປະສົງທີ່ກໍານົດໄວ້ເພື່ອເປັນເຄື່ອງມືໃນການເກັບກໍາຂໍ້ມູນ,

- ນໍາແບບສອບຖາມທີ່ສ້າງຂຶ້ນສະເໜີອາຈານທີ່ປຶກສາກວດສອບດ້ານເນື້ອໃນ ແລະ ໂຄງສ້າງຂອງແບບສອບຖາມ.

- ນໍາແບບສອບຖາມໄປປັບປຸງແກ້ໄຂຕາມຄໍາແນະນໍາຂອງອາຈານທີ່ປຶກສາ.

- ນໍາແບບຖາມທີ່ໄດ້ໄປສະເໜີໃຫ້ຜູ້ຊ່ຽວຊານຈໍານວນ 3 ທ່ານເພື່ອພິຈາລະນາດ້ານເນື້ອໃນ, ຈາກນັ້ນຫາຄວາມສອດຄ່ອງຄ່າ IOC (Index of Item Objective Congruence )ໂດຍເລືອກເອົາຂໍ້ຄໍາຖາມທີ່ມີຄວາມສອດຄ່ອງຢູ່ລະຫວ່າງ 0.5 ຂຶ້ນໄປມາສ້າງເປັນແບບສອບຖາມຕາມສວນປະມານຄ່າ 5 ລະດັບ.

- ນໍາແບບສອບຖາມສະເໜີອາຈານທີ່ປຶກສາເພື່ອພິຈາລະນາອີກຄັ້ງໃໝ່ແລ້ວປັບປຸງແກ້ໄຂເພື່ອນໍາໄປທົດລອງໃຊ້.

- ນໍາແບບສອບຖາມທົດລອງໃຊ້ (Try-out) ກັບປະຊາກອນທີ່ບໍ່ແມ່ນກຸ່ມເປົ້າໝາຍ 30 ຄົນ ທີ່ໂຮງຮຽນມັດທະຍົມ ເມືອງ ສາລະວັນ ແຂວງສາລະວັນ.

- ນຳຂໍ້ມູນທີ່ໄດ້ຈາກການທົດລອງມາຫາຄ່າຄວາມເຊື່ອໝັ້ນ(Reliability)ຂອງແບບສອບຖາມໃຊ້ຄ່າສຳປະສິດ( Alpla-Coefficient ) ຕາມວິທີຂອງ (Cronbach) ບຸນຊົມ ສີ ສະອາດ (2010: 116-119) ຄ່າຄວາມເຊື່ອໝັ້ນທີ່ຍອມຮັບໄດ້ເທົ່າກັບ 0,95 ຂຶ້ນໄປ.

**ຂັ້ນຕອນທີ2** ສຶກສາສະພາບບັນຫາການຂໍຕຳແໜ່ງຄູວິຊາການຄູຂອງຄູສອນໃນຊັ້ນມັດທະຍົມສົມບູນແຂວງຈຳປາສັກ,ປະຊາກອນທີ່ໃຊ້ໃນການສຶກສາຄັ້ງນີ້ໄດ້ແກ່ຄູຜູ້ທີ່ສິດສອນໃນໂຮງຮຽນມັດທະຍົມສົມບູນສຶກສາ ແຂວງຈຳປາສັກ ສົກຮຽນ 2022 ຈຳນວນ 2,481 ຄົນ, ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາຄັ້ງນີ້ຄືຄູຜູ້ທີ່ສິດສອນໃນໂຮງຮຽນມັດທະຍົມສົມບູນແຂວງຈຳນວນ344ຄົນ. ຕາຕະລາງປະຊາກອນ ແລະ ກຸ່ມຕົວຢ່າງ (ເບິ່ງຢູ່ໜ້າທີ)

**ຂັ້ນຕອນທີ3** ວິເຄາະຄວາມຄິດເຫັນຂອງຄູສອນໃນໂຮງຮຽນມັດທະຍົມສົມບູນສຶກສາແຂວງຈຳປາສັກຕໍ່ສະພາບບັບຫາການຂໍຕຳແໜ່ງວິຊການຄູໂດຍຈຳແນກຕາມເພດ, ວຸດທິການສຶກສາ ແລະ ປະສົບການໃນການເຮັດວຽກ,

- ເພື່ອປຽບທຽບຄວາມຄິດເຫັນຂອງຄູສອນຕໍ່ກັບການຂໍຕຳແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດທະຍົມສົມບູນ ແຂວງຈຳປາສັກ ຈຳແນກຕາມເພດດ້ວຍ t-test ແລະ f-test
- ເພື່ອປຽບທຽບຄວາມຄິດເຫັນຂອງຄູສອນຕໍ່ກັບການຂໍຕຳແໜ່ງວິຊາການຄູຂອງຄູສອນໃນຊັ້ນມັດທະຍົມສົມບູນ ທີ່ສັງກັດ ແຂວງຈຳປາສັກ ຈຳແນກຕາມວຸດທິການສຶກສາ ດ້ວຍ t-test
- ເພື່ອປຽບທຽບຄວາມຄິດເຫັນຂອງຄູສອນຕໍ່ກັບການຂໍຕຳແໜ່ງຄູວິຊາການຄູຂອງຄູສອນໃນຊັ້ນມັດທະຍົມສົມບູນ ແຂວງຈຳປາສັກຈຳແນກຕາມປະສົບການສອນດ້ວຍ f-test

## 6. ຜົນໄດ້ຮັບ

ຜົນໄດຮັບຈາກການສຶກສາສະພາບບັນຫາການຂໍຕຳແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດທະຍົມສົມບູນແຂວງ ຈຳປາສັກ, ເຫັນວ່າຄູສອນໃນໂຮງຮຽນມັດທະຍົມສົມບູນ ແຂວງຈຳປາສັກ ສ່ວນໃຫຍ່ແມ່ນມີຄວາມຮູ້, ຄວາມສາມາດ ແລະ ມີວຸດທິການສຶກສາ,ມີປະສົບການເຮັດວຽກ ແລະ ຄວາມຮັບຊອບຕໍ່ໜ້າທີ່ວຽກງານສູງຕໍ່ກັບການວຽກງານວິຊາສະເພາະທີ່ຕົນຮັບຜິດຊອບ ແລະ ໄດ້ຮັບການຝຶກອົບຮົມທາງດ້ານວິຊາການສອນເປັນປົກກະຕິ-ຕໍ່ເນື່ອງ ແລະ ໄດ້ສິດສອນມາເປັນເວລາຫລາຍປີ,ມີຄວາມຮັກ,ຊື່ສັດ ແລະ ອຸ່ນອ່ຽງທຸ່ມທ່ຽງຕໍ່ອາຊີບ,ມີຄວາມຮັບຜິດຊອບຕໍ່ພາລະໜ້າທີ່ການຈັດຕັ້ງມອບໝາຍສຳເລັດຜົນ ແລະ ສາມາດສ້າງຜົນງານທາງວິຊາການຈົນໄດ້ຮັບການຍ້ອງຍໍຊົມເຊີຍຜົນໄດ້ຮັບຈາກການປຽບທຽບຄວາມຄິດເຫັນຂອງຄູສອນຕໍ່ກັບສະພາບບັນຫາການຂໍຕຳແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດມທະຍົມສົມບູນ ແຂວງ ຈຳປາສັກ ເຫັນວ່າຄູສອນທີ່ມີເພດຕ່າງກັນມີຄວາມຄິດເຫັນຕໍ່ກັບສະພາບບັນຫາການຂໍຕຳແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດມທະຍົມສົມບູນ ແຂວງຈຳປາສັກ ໂດຍພາບລວມເຫັນວ່າບໍ່ແຕກຕ່າງກັນ, ມີພຽງແຕ່ດ້ານແນວຄິດຄຸນສົມບັດມີຄວາມຄິດເຫັນແຕກຕ່າງກັນ ທັງນີ້ອາດເປັນເພາະວ່າຄູສອນທີ່ເປັນເພດຍິງຍັງຂາດຫືວຄິດປະດິສ້າງຂາດຄວາມເປັນຜູ້ນຳພາ,ຍັງຂາດຄວາມເປັນຢ່າງແບບຢ່າງຄວາມເຊື້ອໝັ້ນຈາກມະຫາຊົນ

ຜົນໄດ້ຮັບຈາກການປຽບທຽບຄວາມຄິດເຫັນຂອງຄູສອນຕໍ່ກັບສະພາບບັນຫາການຂໍຕຳແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດມທະຍົມສົມບູນແຂວງ ຈຳປາສັກ ຈຳແນກຕາມວຸດທິການສຶກສາ. ເຫັນວ່າຄູສອນທີ່ມີວຸດທິການສຶກສາຕ່າງກັນມີຄວາມຄິດເຫັນຕໍ່ກັບສະພາບບັນຫາການຂໍຕຳແໜ່ງວິຊາການຂອງຄູສອນໃນໂຮງຮຽນມັດມທະຍົມສົມບູນ ແຂວງ ຈຳປາ

ສັກ ໂດຍລວມ ແລະ ແຕ່ລະດ້ານເຫັນວ່າແຕກຕ່າງກັນ ທັງນີ້ອາດເປັນເພາະຜູ້ບໍລິຫານ ແລະ ຄູສອນມີລະດັບການສຶກສາຕ່າງກັນການປະຕິບັດໜ້າທີ່ໃນສະຖານການສຶກສາມີລັກສະນະແຕກຕ່າງກັນ.

ຜົນໄດ້ຮັບຈາກການປຽບທຽບຄວາມຄິດເຫັນຂອງຄູສອນຕໍ່ກັບສະພາບບັນຫາການຂໍຕໍາແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດທະຍົມສົມບູນ ແຂວງ ຈໍາປາສັກ ຈໍາແນກຕາມປະສົບການໃນການເຮັດວຽກ ເຫັນວ່າຄູສອນທີ່ມີປະສົບການໃນການເຮັດວຽກແຕກຕ່າງກັນ ມີຄວາມຄິດເຫັນຕໍ່ກັບສະພາບບັນຫາການຂໍຕໍາແໜ່ງວິຊາການຂອງຄູສອນໃນໂຮງຮຽນມັດທະຍົມສົມບູນ ແຂວງຈໍາປາສັກ ໂດຍລວມ ແລະ ໃນແຕ່ລະດ້ານແມ່ນບໍ່ແຕກຕ່າງກັນ. ອາດເປັນເພາະວ່າຄູສອນໄດ້ຜ່ານການຄົ້ນຄວ້າຍົກດັບ ຫລື ຝຶກອົບຮົບດ້ານວຽກງານວິຊາສະເພາະມາແລ້ວຫລາຍປີຈຶ່ງເຮັດໃຫ້ຜູ້ທີ່ມີປະສົບການໃນການເຮັດວຽກໃນດ້ານກການສອນຕ່າງກັນມີຄວາມຄິດເຫັນຕໍ່ກັບສະພາບບັນຫາການຂໍຕໍາແໜ່ງວິຊາການຂອງຄູສອນບໍ່ແຕກຕ່າງ

**7. ວິພາຜົນ**

ຜົນຈາກການສຶກສາສະພາບບັນຫາການຂໍຕໍາແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດທະຍົມສົມບູນແຂວງຈໍາປາສັກ,ໂດຍລວມແມ່ນຈັດຢູ່ໃນລະດັບໜ້ອຍ. ເນື່ອງຈາກວ່າຄູສອນໃນໂຮງຮຽນມັດທະຍົມສົມບູນແຂວງຈໍາປາສັກ ສ່ວນໃຫຍ່ແມ່ນມີຄວາມຮູ້, ຄວາມສາມາດ ແລະ ມີວຸດທິການສຶກສາ,ມີປະສົບການເຮັດວຽກ ແລະ ຄວາມຮັບຊອບຕໍ່ໜ້າທີ່ວຽກງານສູງຕໍ່ກັບການວຽກງານວິຊາສະເພາະທີ່ຕົນຮັບຜິດຊອບ ແລະ ໄດ້ຮັບການຝຶກອົບຮົມທາງດ້ານວິຊາການສອນເປັນປົກກະຕິ-ຕໍ່ເນື່ອງ ແລະ ໄດ້ສິດສອນມາເປັນເວລາຫລາຍປີ,ມີຄວາມຮັກ,ຊື່ສັດ ແລະ ອຸ່ນອ່ຽງທຸ່ມທ່ຽງຕໍ່ອາຊີບ, ມີຄວາມຮັບຜິດຊອບຕໍ່ພາລະໜ້າທີ່ທີ່ການຈັດຕັ້ງມອບ ໝາຍສໍາເລັດຜົນ ແລະ ສາມາດສ້າງຜົນງານທາງວິຊາການຈົນໄດ້ຮັບການຍ້ອງຍໍຊົມເຊີຍຈາກການຈັດຕັ້ງຂັ້ນເທິງເຊິ່ງສອດຄ່ອງກັບທິດສະດີຂອງ (ຈະຕຸລາ ພັດປະທຸມ ປີ2019)ໄດ້ເວົ້າວ່າການພັດທະນາວິຊາຊີບຄູແມ່ນໝາຍເຖິງ: ຂະບວນການພັດທະນາວິຊາຊີບຄູໂດຍການມີສ່ວນຮ່ວມແລກປ່ຽນຮຽນຮູ້ຮ່ວມກັນໃນລະດັບສະຖານການສຶກສາ,ລະດັບເຄືອຂ່າຍຫຼືລະດັບຊາດ, ສະແດງບົດບາດໃນຊຸມຊົນການຮຽນຮູ້ທາງວິຊາຊີບ(Professional Learning Community: PLC) ມີຄວາມສໍາພັນກັນຢ່າງສະນິດແໜ້ນ.ມີວິໄສທັດເປົ້າໝາຍ ແລະ ພາລະກິດຮ່ວມກັນເພື່ອໃຫ້ເກີດເປັນວັດທະນະທໍາຂອງອົງກອນ ແລະ ສ້າງນະວັດຕະກໍາຈາກການເຂົ້າຮ່ວມໃນຊຸມຊົນການຮຽນຮູ້ທາງດ້ານວິຊາຊີບໂດຍນໍາຄວາມຮູ້, ຄວາມສາມາດ,ທັກສະໄດ້ຈາກການພັດທະນາວິຊາຊີບມາພັດທະນາການຈັດການຮຽນຮູ້ຕໍ່ຜູ້ຮຽນເຊິ່ງມີລະດັບຄຸນນະພາບຄື: 1.) ເຂົ້າຮ່ວມຊຸມຊົນການຮຽນຮູ້ທາງວິຊາຊີບ; 2) ນໍາອົງຄວາມຮູ້ທີ່ໄດ້ຈາກການເຂົ້າຮ່ວມຊຸມຊົນການຮຽນທາງວິຊາຊີບໄປນໍາໃຊ້ໃນການຈັດການຮຽນ - ການສອນ; 3.)ສ້າງນະວັດຕະກໍາທີ່ໄດ້ຈາກການເຂົ້າຮ່ວມໃນຊຸມຊົນການຮຽນຮູ້ວິຊາຊີບ; 4.) ສ້າງເຄືອຂ່າຍຊຸມຊົນການຮຽນຮູ້ທາງວິຊາຊີບ; 5.) ສ້າງນະວັດຕະກໍາທາງການຮຽນຮູ້ໃນສະຖານການສຶກສາ; 6) ເປັນຜູ້ນໍາການປ່ຽນແປງທີ່ສົ່ງຜົນຕໍ່ເພື່ອນຮ່ວມວິຊາຊີບ; 7.) ເປັນແບບຢ່າງທີ່ດີ.

1) ສະພາບບັນຫາການຂໍຕໍາແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດທະຍົມສົມບູນແຂວງຈໍາປາສັກ

ດ້ານວຸດການສຶກສາໂດຍລວມແມ່ນຈັດຢູ່ໃນລະດັບໜ້ອຍສຸດ. ເນື່ອງຈາກວ່າຄູສອນໃນໂຮງຮຽນມັດທະຍົມສົມບູນສ່ວນໃຫຍ່ແມ່ນຄູທີ່ຮຽນຈົບວິຊາສະເພາະຄູ, ມີໃບປະກອບອາຊີບຄູ ຫຼື ໃບຢັ້ງຢືນວິຊາຄູ ແລະ ໄດ້ຮັບຝຶກອົບຮົບການສິດສອນຫລັກສູນຂັ້ນ

ມັດທະຍົມສຶກສາເປັນປົກກະຕິຕໍ່ເນື່ອງ ເຊິ່ງສອດຄ່ອງກັບກົດໝາຍ ວ່າດ້ວຍການສຶກສາ

ລາວປີ2016ສະບັບປັບປຸງ ໂດຍໄດ້ແບ່ງຊັ້ນການສຶກສາສາຍມັນສຶກສາອອກເປັນ 4 ລະດັບການສຶກສາຄື: ການສຶກສາກ່ອນໄວຮຽນ (ຊັ້ນອະນຸບານ), ປະຖົມສຶກສາ,ມັດທະຍົມສຶກສາ. ເປັນການສຶກສາທີ່ເນັ້ນຄຸນະພາບທາງດ້ານຮຽນ-ການສອນໃຫ້ໄດ້ຄຸນນະພາບ, ສ້າງໄດ້ນັກຮຽນດີ, ນັກຮຽນເກັ່ງ, ນັກຮຽນທີ່ມີພອນສະຫວັນເພື່ອກ້າວເຂົ້າສູ່ສາຍອາຊີວະສຶກສາ ແລະ ປະກອບອາຊີບດັ່ງນັ້ນ, ຜູ້ຖ່າຍທອດຄວາມຮູ້ຂອງການສຶກສາລະດັບນີ້ຈິ່ງຕ້ອງມີຄວາມຮູ້:ມີປະສົບການ, ມີການຄົ້ນຄວ້າຄວາມຮູ້ໃໝ່ເຊັ່ນ:ການສຶກສາຄົ້ນຄວ້າວິໄຈຢ່າງຕໍ່ເນື່ອງ.

1) ສະພາບບັນຫາການຂໍຕຳແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດທະຍົມສົມບູນ ແຂວງຈຳປາສັກ ໃນດ້ານປະສົບການໃນການເຮັດວຽກ. ໂດຍລວມແມ່ນຈັດຢູ່ໃນລະດັບໜ້ອຍ. ເນື່ອງຈາກວ່າຄູສອນທີມີວິຊາສະເພາະຈົບປະລິນຍາຕີ,ວິຊາສະເພາະຈົບຊັ້ນສູງ ແລະ ວິຊາສະເພາະຈົບຊັ້ນກາງ ສ່ວນຫລາຍແມ່ນມີປະສົບການໃນການສິດສອນມາໄດ້ຫລາຍປີ.ເຊິ່ງສອດຄ່ອງກັບດຳລັດວ່າດ້ວຍຕຳແໜ່ງວິຊາການຄູໃນລະດັບຕໍ່າກວ່າສະຖານບັນການສຶກສາຊັ້ນສູງສະບັບເລກທີ209/ລບ,ປີ2007:ໄດ້ກຳນົດມາດຕະຖານຕຳແໜ່ງວິຊາການຄູໄວ້ວ່າ:ຄູສອນທີ່ຈົບວິຊາສະເພາະປະລິນຍາປະລິນຍາເອກ ຫລື ທຽບເທົ່າຕ້ອງໄດ້ຜ່ານການສິດສອນມາແລ້ວຢ່າງໜ້ອຍ03ປີ,ຄູສອນທີ່ຈົບວິຊາສະເພາະປະລິນຍາໂທຫລື ທຽບເທົ່າຕ້ອງໄດ້ຜ່ານການສິດສອນມາແລ້ວຢ່າງໜ້ອຍ04ປີ, ຄູສອນທີ່ຈົບວິຊາສະເພາະປະລິນຍາຕີຫລື ທຽບເທົ່າຕ້ອງໄດ້ຜ່ານການສິດສອນມາແລ້ວຢ່າງໜ້ອຍ 06 ປີ, ຄູສອນທີ່ຈົບວິຊາສະເພາະຊັ້ນສູງ ຫລື ທຽບເທົ່າຕ້ອງໄດ້ຜ່ານການສິດສອນມາແລ້ວຢ່າງໜ້ອຍ07ປີ,ຄູສອນທີ່ຈົບວິຊາສະເພາະຊັ້ນກາງ ຫລື ທຽບເທົ່າ ຕ້ອງໄດ້ຜ່ານການສິດສອນມາແລ້ວຢ່າງໜ້ອຍ 09 ປີ

2) ສະພາບບັນຫາການຂໍຕຳແໜ່ງວິຊາການ

ຄູຂອງຄູສອນໃນໂຮງຮຽນມັດທະຍົມສົມບູນແຂວງຈຳປາສັກໃນດ້ານແນວຄິດຄຸນສົມບັດໂດຍລວມຢູ່ໃນລະດັບໜ້ອຍສຸດ,ເນື່ອງວ່າຄູສອນແມ່ນເປັນຜູ້ທີ່ມີຄວາມຮູ້, ຄວາມສາມາດ, ມີຄວາມຊື່ສັດ, ເປັນແບບຢ່າງນຳໜ້າ, ມີທັດສະນະຫລັກໝັ້ນ, ການເມືອງໜັກແໜ້ນ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດບ້ານເມືອງ, ໄດ້ຮັບການໄວ້ເນື້ອເຊື່ອໃຈຈາກພໍ່ແມ່ປະຊາຊົນ, ໃນການຝຶກຝົນຫຼໍ່ຫລອມລູກຫລານໃຫ້ກາຍເປັນພົນລະເມືອງດີຂອງຊາດ, ເຊິ່ງສອດຄ່ອງກັບຈັນຍາບັນຄູລາວໄດ້ກຳນົດໄວ້ 5 ຄຸນລັກສະນະຫລັກຂອງຄູມີຄື: 1.) ຊື່ສັດບໍລິສຸດ, 2.) ຮັກອາຊີບ, 3.) ຮັກແພງຜູ້ຮຽນ,4.) ເປັນແບບຢ່າງນຳໜ້າ,5.) ພັດທະນາຕົນເອງ ແລະ ສອດຄ່ອງ 3 ລັກສະນະ 5 ຫລັກມູນຂອງການສຶກສາ (ຄຸນສົມບັດສຶກສາ ໄດ້ຊີ້ໃຫ້ເຫັນເຖິງການສຶກສາເພື່ອໃຫ້ຜູ້ຮຽນເປັນຄົນດີ,ປະພຶດດີ,ມີຄຸນລັກສະນະຕາມທີ່ຕ້ອງການທາງດ້ານແນວຄິດ,ທັດສະນະ,ຄ່ານິຍົມ ແລະ ພຶດຕິກຳທີ່ສະແດງອອກ)

3) ສະພາບບັນຫາການຂໍຕຳແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດທະຍົມສົມບູນ ແຂວງຈຳປາສັກ ໃນດ້ານໜ້າທີ່ຮັບຜິດຊອບ ໂດຍລວມຢູ່ໃນລະດັບໜ້ອຍ ເຫັນວ່າ: ຄູສອນຢູ່ໃນໂຮງຮຽນມັດທະຍົມແມ່ນມີຄວາມເອົາໃຈໃສ່ຕໍ່ການປະຕິບັດໜ້າທີ່ຄວາມຮັບຜິດຊອບຂອງຕົນຕາມການມອບໝາຍຂອງຜູ້ອຳນວຍການ ແລະ ໜ່ວຍງານວິຊາການມອບໝາຍໃຫ້ໂດຍສະເພາະແມ່ນດ້ານການແຕ່ງບົດສອນ, ແຜນການສອນ ແລະ ການສ້າງຊື່ການຮຽນ - ການສອນໃຫ້ທັນກັບໂຄງການຫລັກສູດທີ່ກະຊວງສຶກສາທິກຳນົດອອກ, ເຊິ່ງສອດຄ່ອງກັບທິດສະດີຂອງ ພຣະທຳປິດົກ ປ.ອ.ປະຍຸໂຕ( 1998 ໜ້າ153) ໄດ້ລະບຸໄວ້ວ່າ

ບົດບາດຂອງຄູໂດຍສະເພາະຄູຜູ້ສອນໄວ້ວ່າ: ຄູຕ້ອງເປັນຜູ້ສ້າງຄວາຮູ້ສຶກເປັນກັນເອງ,ມີຄວາມປະພຶດສົມຄວນແກ່ຖານະເປັນທີ່ພຶ່ງໄດ້. ເປັນຜູ້ຝຶກຝົນ,ປັບປຸງຕົນເອງຢູ່ຕະຫຼອດເວລາຮູ້ຈັກຊີ້ແຈງໃຫ້ເຂົາເຂົ້າໃຈແນະນຳຕັກເຕືອນເປັນທີ່ປຶກສາທີ່ດີ, ບົດບາດຂອງຄູຄວນໄດ້ຮັບການພັດທະນາໂດຍຖືເອົາຜູ້ຮຽນເປັນໃຈກາງການຮຽນຮູ້, ສາມາດໃຊ້ສື່ການສອນມາປະກອບການສອນ, ຕ້ອງກຽມຄວາມພ້ອມໃນທຸກດ້ານຕັ້ງແຕ່ການສຳຫຼວດຄວາມຕ້ອງການ, ກະກຽມການສອນ, ການດຳເນີນການສອນ, ການວັດປະເມີນຜົນ ແລະ ການສະຫຼຸບກິດຈະກຳໃນການດຳເນີນການ, ປະກອບແບບການຈັດການຮຽນ - ການສອນທີ່ເນັ້ນຜູ້ຮຽນເປັນສຳຄັນ, ການວິໄຈໃນຊັ້ນຮຽນ, ການວັດ ແລະ ປະເມີນຜົນ, ການໃຊ້ສື່ ແລະ ເຕັກໂນໂລຊີ, ການຝຶກອົບຮົມສຳມະນາ ແລະ ການສົ່ງເສີມໃຫ້ມີການສຶກສາຕໍ່ເປັນຕົ້ນ

4) ສະພາບັນຫາການຂໍຕຳແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດທະຍົມສົມບູນ ແຂວງຈຳປາສັກ.

ດ້ານຜົນງານທາງດ້ານວິຊາການ ໂດຍລວມຢູ່ໃນລະດັບໜ້ອຍ ເນື່ອງຈາກວ່າ:ຄູສອນສ່ວນຫລາຍແມ່ນໄດ້ຜ່ານການສິດສອນມາແລ້ວຫລາຍປີ, ມີຈັນຍາບັນວິຊາຊີບຄູ, ມີປະສົບການເຮັດວຽກສູງ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ການຈັດຕັ້ງມອບໝາຍ, ມີຜົນງານໃນການສິດສອນຫລາກຫລາຍ ແລະ ໄດ້ຮັບການຍ້ອງຍໍຊົມເຊີຍຕໍ່ຜົນງານດັ່ງກ່າວ ສອດຄ່ອງ (Greggerot Phaphithansaham, 1998 ໜ້າ 8) ກ່າວໄວ້ວ່າ: ການສອນ - ການສ້າງຜົນງານທາງວິຊາການເປັນສິ່ງສຳຄັນຂອງການເຂົ້າເຖິງຕຳແໜ່ງທາງວິຊາການຂອງຄູ - ອາຈານໃນໂຮງຮຽນມັດທະຍົມສົມບູນ, ຈະຕ້ອງໄດ້ຮັບການແກ້ໄຂປັບປຸງໂດຍເລີ່ມຕັ້ງແຕ່ການຈູງໃຈໃຫ້ຄູ-ອາຈານຮັກອາຊີບ ແລະ ມີຈິດສຳນຶກໃນການທຸ້ມເທຄວາມຮູ້, ຄວາມສາມາດ, ໃຊ້ຄວາມມຸ້ງໝັ້ນ, ຄວາມພາກພຽນພະຍາຍາມ ແລະ ມີຄວາມມານະອົດທົນ, ການພັດທະນາຄູ-ອາຈານ, ທັດສະນະຄະຕິ, ຄວາມຮູ້, ຄວາມສາມາດດ້ານການຜະລິດຜົນງານວິຊາການ ຈຶ່ງເປັນສິ່ງຈຳເປັນຢ່າງຍິ່ງຕໍ່ການເຂົ້າສູ່ຕຳແໜ່ງທາງວິຊາການ ຊຶ່ງເກີດຈາກປັດໄຈທີ່ສຳຄັນ2ສ່ວນຄື: ປັດໄຈສ່ວນທີໜຶ່ງຄື:ຕົວຄູ-ອາຈານເອງ, ສ່ວນທີສອງຄື: ການສະໜັບສະໜູນຂອງຜູ້ບໍລິຫານສະຖານການສຶກ.

ຜົນການປຽບທຽບສະພາບບັນຫາການຂໍຕຳ ແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດທະຍົມສົມບູນແຂວງ ຈຳປາສັກ ໂດຍຈຳແນກຕາມເພດ, ວຸດທິການສຶກສາ ແລະ ປະສົບການໃນການເຮັດວຽກ

1.ປຽບທຽບຄວາມຄິດເຫັນຂອງຄູສອນຕໍ່ກັບສະພາບບັນຫາການຂໍຕຳແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດມທະຍົມສົມບູນ ແຂວງ ຈຳປາສັກ

ຄູສອນທີ່ມີເພດຕ່າງກັນມີຄວາມຄິດເຫັນຕໍ່ກັບສະພາບບັນຫາການຂໍຕຳແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດມທະຍົມສົມບູນ ແຂວງຈຳປາສັກ ໂດຍພາບລວມເຫັນວ່າບໍ່ແຕກຕ່າງກັນ, ມີພຽງແຕ່ດ້ານແນວຄິດຄຸນສົມບັດມີຄວາມຄິດເຫັນແຕກຕ່າງກັນເປັນໄປຕາມສົມມຸດຕິຖານທີ່ຕັ້ງໄວ້.ທັງນີ້ອາດເປັນເພາະວ່າຄູສອນທີ່ເປັນເພດຍິງຍັງຂາດຫຼືຄິດປະດິດສ້າງຂາດຄວາມເປັນຜູ້ນຳພາ, ຍັງຂາດຄວາມເປັນຢ່າງແບບຢ່າງຄວາມຄວາມເຊື່ອໝັ້ນຈາກມະຫາຊົນເຊິ່ງສອດຄ່ອງກັບບົດວິໄຈຂອງ ສຸຊາດ ໃຫຍ່ເລີດ (2019:76) ໄດ້ສຶກສາຄົ້ນຄວ້າກ່ຽວກັບວິຊາການສຳລັບນັກຮຽນປະລິຍາທຳພະແນກບາລີດີເດັນກຸງເທບມະຫານະຄອນຄົ້ນຄວ້າໃຈພົບວ່າ:ຜົນການປຽບທຽບຄູສອນທີ່ມີເພດ,ອາຍຸ ແລະ ວຸດທິການສຶກສາໂດຍລວມພົບວ່າ:ບໍ່ແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ0.05.ສະຫຼຸບວ່າ:ຜົນການວິເຄາະຂໍ້ມູນບໍ່ສອດຄ່ອງກັບສົມມຸດຖານທີ່ຕັ້ງໄວ້ວ່າຄູສອນທີ່ມີເພດຕ່າງກັນມີຄວາມຄິດເຫັນແຕກຕ່າງກັນ.

2. ປຽບທຽບຄວາມຄິດເຫັນຂອງຄູສອນຕໍ່ກັບສະພາບບັນຫາການຂໍຕຳແໜ່ງວິຊາການຄູຂອງຄູສອນ

ໃນໂຮງຮຽນມັດທະຍົມສົມບູນ ແຂວງ ຈຳປາສັກ ຈຳແນກຕາມວຸດທິການສຶກສາ.

ຄູສອນທີ່ມີວຸດທິການສຶກສາຕ່າງກັນມີຄວາມຄິດເຫັນຕໍ່ກັບສະພາບບັນຫາການຂໍຕຳແໜ່ງວິຊາການຂອງຄູສອນໃນໂຮງຮຽນມັດທະຍົມສົມບູນ ແຂວງ ຈຳປາສັກ ໂດຍລວມ ແລະ ແຕ່ລະດ້ານເຫັນວ່າແຕກຕ່າງກັນເປັນໄປຕາມສົມມຸດຖານທີ່ຕັ້ງ ໄວ້ທັງນີ້ອາດເປັນເພາະຜູ້ບໍລິຫານ ແລະ ຄູສອນມີລະດັບການສຶກສາຕ່າງກັນການປະຕິບັດໜ້າທີ່ໃນສະຖານການສຶກສາມີລັກສະນະແຕກຕ່າງກັນ. ມີພຽງດ້ານ ວຸດທິການສຶກສາ, ດ້ານແນວຄິດຄຸນສົມບັດ, ດ້ານຜົນງານທາງດ້ານວິຊາການ ເຫັນວ່າບໍ່ແຕກຕ່າງ. ເຊິ່ງສອດຄ່ອງກັບບົດວິໄຈຂອງ ວໍລະພອນ ສິນສິລິ (2020: 142) ສະຫຼຸບວ່າ ຜົນການວິເຄາະຂໍ້ມູນສອດຄອງກັບສົມມຸດຖານທີ່ຕັ້ງໄວ້ວ່າ ຜູ້ບໍລິຫານ ແລະ ຄູສອນທີ່ມີວຸດທິການສຶກສາແຕກຕ່າງກັນມີຄວາມຄິດເຫັນຕ່າງກັນ ແມ່ນມີຄວາມແຕກຕ່າງກັນ ເປັນໄປຕາມສົມມຸດຕິຖານທີ່ຕັ້ງໄວ້. ເຊິ່ງສອດຄ່ອງກັບບົດວິໄຈຂອງ ວໍລະພອນ ສິນສິລິ (2020: 142) ສະຫຼຸບວ່າ ຜົນການວິເຄາະຂໍ້ມູນສອດຄອງກັບສົມມຸດຖານທີ່ຕັ້ງໄວ້ວ່າຄູສອນທີ່ມີວຸດທິການສຶກສາແຕກຕ່າງກັນມີຄວາມຄິດເຫັນຕ່າງກັນ

5) ປຽບທຽບຄວາມຄິດເຫັນຂອງຄູສອນຕໍ່ກັບສະພາບບັນຫາການຂໍຕຳແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດທະຍົມສົມບູນ ແຂວງ ຈຳປາສັກ ຈຳແນກຕາມປະສົບການໃນການເຮັດວຽກຄູສອນທີ່ມີປະສົບການໃນການເຮັດວຽກແຕກຕ່າງກັນມີຄວາມຄິດເຫັນຕໍ່ກັບສະພາບບັນຫາການຂໍຕຳແໜ່ງວິຊາການຂອງຄູສອນໃນໂຮງຮຽນມັດທະຍົມສົມບູນ ແຂວງຈຳປາສັກ ໂດຍລວມ ແລະ ໃນແຕ່ລະດ້ານແມ່ນບໍ່ແຕກຕ່າງກັນອາດເປັນເພາະວ່າຄູສອນໄດ້ຜ່ານການສິດສອນມາແລ້ວຫລາຍປີ ຈົນເຮັດໃຫ້ການສິດສອນໄດ້ມີຄວາມສຳນິສຳນານ ແລະ ຄ່ອງແຄ່ວໂດຍບໍ່ໄດ້ຜ່ານການຍົກດັບຫລື ຝຶກອົບຮົບດ້ານວຽກງານວິຊາສະເພາະໃດໆເຊິ່ງສອດຄ່ອງກັບບົດວິໄຈຂອງ ທ່ານ ສຸນິສາ ວໍລະນິນ, (2002) ສະຫລຸບວ່າ ການຈັດກິດຈະກຳການສອນໂດຍອີງໃສ່ຜູ້ຮຽນເປັນສຳຄັນ, ເປັນເຕັກນິກການສອນແບບໃໝ່ທີ່ຍັງບໍ່ເຄີຍໄດ້ຮັບການສາ ຫລື ຝຶກອົບຮົມມາກ່ອນ. ປະກອບກັບການປະຕິບັດໜ້າທີ່ວຽກງານກໍ່ບໍ່ເຄີຍມຸ່ງໝັ້ນເປົ້າໝາຍດັ່ງກ່າວ.ຈຶ່ງເຮັດໃຫ້ຜູ້ທີ່ມີປະສົບການໃນການເຮັດວຽກໃນດ້ານກການສອນຕ່າງກັນມີຄວາມຄິດເຫັນຕໍ່ກັບສະພາບບັນຫາການຂໍຕຳແໜ່ງວິຊາການຂອງຄູສອນບໍ່ແຕກຕ່າງ

**8. ສະຫລຸບຜົນ**

ຜົນການວິເຄາະຂໍ້ມູນກ່ຽວກັບສະພາບບັນຫາການຂໍຕຳແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດທະຍົມສົມບູນແຂວງ ຈຳປາສັກ ໂດຍລວມແມ່ນຈັດຢູ່ໃນລະດັບໜ້ອຍເມື່ອພິຈາລະນາໃນແຕ່ລະດ້ານເຫັນວ່າ:ດ້ານປະສົບການເຮັດວຽກມີຄ່າສະເລ່ຍສູງກວ່າໝູ່ຈັດຢູ່ໃນລະດັບໜ້ອຍ ແລະ ດ້ານວຸດທິການສຶກສາມີຄ່າສະເລ່ຍຕໍ່າກວ່າໝູ່ຈັດຢູ່ໃນລະດັບໜ້ອຍສຸດ.

ຜົນຂອງການປຽບທຽບເຫັນວ່າດ້ານວຸດທິການສຶກສາ, ດ້ານປະສົບການເຮັດວຽກ, ດ້ານໜ້າທີ່ຮັບຜິດຊອບ, ດ້ານຜົນງານທາງດ້ານວິຊາການແມ່ນບໍ່ຕ່າງກັນ ແລະ ມີພຽງດ້ານດຽວຄື: ດ້ານແນວຄິດຄຸນສົມບັດທີ່ມີຄວາມແຕກຕ່າງກັນ ແລະ ສອດຄ່ອງກັບສົມມຸດຖານທີ່ຕັ້ງໄວ້ຢ່າງມີຄວາມສຳຄັນທາງສະຖິຕິທີ່ດັບ 0.05.

ຜົນຂອງການປຽບທຽບເຫັນວ່າດ້ານວຸດທິການສຶກສາ,ດ້ານແນວຄິດຄຸນສົມບັດ,ດ້ານຜົນງານທາງດ້ານແມ່ນບໍ່ມີຄວາມຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0,05 ແຕ່ຍັງມີດ້ານປະສົບການໃນການເຮັກວຽກດ້ານໜ້າທີ່ຮັບຜິດຊອບມີຄວາມແຕກຕ່າງກັນ ແລະ ສອດຄ່ອງກັບສົມມຸດຖານທີ່ຕັ້ງໄວ້ຢ່າງມີຄວາມສຳຄັນທາງສະຖິຕິທີ່ດັບ 0.05.

ຜົນຂອງການປຽບທຽບເຫັນວ່າ ດ້ານວຸດທິການສຶກສາ, ດ້ານປະສົບການເຮັດວຽກ,ດ້ານແນວຄິດຄຸນສົມບັດ,ດ້ານໜ້າທີ່ຮັບຜິດຊອບ,ດ້ານຜົນງານທາງວິຊາການແມ່ນບໍ່ມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0,05.

ຜົນການສຶກສາສະພາບບັນຫາການຂໍຕຳແໜ່ງວິຊາການຄູຂອງຄູສອນໃນໂຮງຮຽນມັດທະຍົມສົມບູນແຂວງ ຈຳປາສັກໂດຍລວມແມ່ນຢູ່ໃນລະດັບໜ້ອຍ, ດ້ານທີ່ມີຄ່າສະເລ່ຍສູງກວ່າໝູ່ແມ່ນດ້ານປະສົບການໃນການເຮັດວຽກ,ຮອງລົງມາດ້ານຜົນງານທາງດ້ານວິຊາການ, ຮອງລົງມາແມ່ນດ້ານແນວຄິດຄຸນສົມບັດ, ຮອງລົງມາແມ່ນດ້ານໜ້າທີ່ຮັບຜິດຊອບແລະ ດ້ານທີ່ມີຄ່າສະເລ່ຍຕ່ຳກວ່າໝູ່ແມ່ນດ້ານວຸດທິການສຶກສາ

**9. ຄວາມຮູ້ບຸນຄຸນ**

ຂ້າພະເຈົ້າເປັນນັກສຶກສາປະລິນຍາໂທສາຂາວິທະຍາສາດການສຶກສາ, ມະຫາວິທະຍາໄລຈຳປາສັກມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ໄດ້ມາສຶກສາຢູ່ໃນສະຖານທີ່ແຫ່ງນີ້,ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈມາຍັງບັນດາທ່ານທີ່ໄດ້ໃຫ້ການອົບຮົມສັ່ງສອນ,ອຳນວຍຄວາມສະດວກທາງດ້ານເອກະສານ,ຂໍ້ມູນ, ໃຫ້ຄຳແນະນຳຊີ້ແນະຕະຫຼອດມາ ແລະ ວັດຖຸປັດໄຈຕ່າງໆເຊິ່ງໄດ້ອຳນວຍຄວາມສະດວກໃຫ້ແກ້ຂ້າພະເຈົ້າຈົນມາເຖິງຈຸດນີ້ໄດ້.

ຂໍຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງມາຍັງທ່ານ ປອ ນວນເພັດ ຄຳພູນວົງ ອາຈານທີ່ປຶກສາວິທະຍານິພົນ ພ້ອມດ້ວຍ ທ່ານ  ສອນເພັດ ສີສຸລາດ, ທ່ານສົມພຽນ ມະຫາພົມ ຄູຜູ້ຊ່ວຍທີ່ປຶກສາວິທະຍານິພົນທີ່ໄດ້ໃຫ້ຄຳຄິດ,ຄຳເຫັນ,ແນະນຳ,ໃຫ້ຄຳປຶກສາ,ຊ່ວຍເຫຼືອປັບປຸງບົດວິທະຍານິພົນຂອງຂ້າພະເຈົ້າໃຫ້ຄົບຖ້ວນ ແລະ ສົມບູນ ແລະ ສຳເລັດຢ່າງມີປະສິດທິພາບ,ເຊິ່ງເຫັນໄດ້ວ່າບົດຮຽນອັນລ້ຳຄ່າທີ່ຂ້າພະເຈົ້າໄດ້ຮັບຈາກບັນດາທ່ານຈະຊ່ວຍເຮັດໃຫ້ຂ້າພະເຈົ້າໄດ້ຊອກເຫັນຄວາມຮູ້ໃໝ່ໆເພື່ອຈະນຳໄປພັດທະນາອົງການຈັດຕັ້ງໃຫ້ມີຜົນສຳເລັດຢ່າງມີປະສິດທິພາບ ແລະ ຄຸນນະພາບສູງຂຶ້ນກວ່າເກົ່າ.

ຂໍຂອບໃຈ ແລະ ຮູ້ບຸນຄຸນມາຍັງທ່ານ ປອ ອິນທະແສງ ອິນທະລາຊາ, ທ່ານ ປ,ອ ຂັນທະລີ ພິມມະເສນ, ທ່ານ ປທ ກິໄຊຍະຈັກ ທີ່ໄດ້ໃຫ້ຄວາມຊ່ວຍເຫລືອ ແລະ ປັບປຸງແບບສອບຖາມເພື່ອໃຫ້ໃນການເກັບກຳຂໍ້ມູນໃຫ້ຈັດເຈນ ແລະ ມີຄຸນນະພາບ, ຖືກຕ້ອງ ແລະ ສອດຄ່ອງກັບເນື້ອ, ຈຸດປະສົງຂອງບົດວິທະຍານິພົນໃຫ້ມີຄຸນນະພາບ.

ຂໍຂອບໃຈມາຍັງຜູ້ອຳນວຍການໂຮງຮຽນ, ຄູ-ອາຈານສອນໃນມັດທະຍົມສົມບູນທີ່ນອນໃນກຸ່ມຕົວຢ່າງທີ່ໄດ້ໃຫ້ຄວາມຮ່ວມມື ແລະ ເສຍສະຫລະເວລາອັນມີຄຸນຄ່າຊ່ວຍຕອບແບບສອບຖາມໃຫ້ຂ້າພະເຈົ້າໃນການລົງເກັບຂໍ້ມູນຄັ້ງນີ້ໄດ້ເນື້ອໃນຄົບຖ້ວນ ແລະ ສົມບູນຕາມຈຸດປະສົງທີ່ກຳນົດໄວ້.

ຂ້າພະເຈົ້າ,ໃນນາມນັກສຶກສາປະລິນຍາໂທສາຂາວິທະຍາສາດການສຶກສາ,   ຄະນະສຶກສາສາດມະຫາວິທະຍາໄລ ຈຳປາສັກ ຂໍອວຍພອນໄຊມາຍັງທຸກໆທ່ານທີ່ໄດ້ໃຫ້ຄວາມຊ່ວຍເຫລືອຂ້າພະເຈົ້າຈົນໄດ້ຮັບຜົນສຳເລັດ, ຂໍໃຫ້ທ່ານຈົ່ງມີສຸຂະພາບເຂັ້ມແຂງ, ແຂງແຮງຈົ່ງປະສົບຜົນສຳເລັດໃນໜ້າທີ່ວຽກງານ ແລະ ມີຄວາມສຸກສົມຫວັງທຸກຢ່າງທັງໃນສ່ວນຕົວ ແລະ ຄອບຄົວຂອງທ່ານ (ຂໍຂອບໃຈ).

**10. ເອກະສານອ້າງອີງ**

https://www.novabizz.com/NovaAce/Behavior/Need_Theories.htm

Herzberg Frederick.The Motivation to Work New York: john Wiley and sons(1959).

Sarunyu Sirichaenthorn (ປີ2013: ບົດຄັດຫຍໍ້)ໄດ້ສຶກສາ ປັດໄຈແຮງຈູງໃຈທີ່ມີຜົນຕໍ່ຄວາມເປັນຄູມືອາຊີບຂອງຄູຢູ່ໃນສະຖາບັນການສຶກສາຂັ້ນພື້ນຖານຊັ້ນປະຖົມສຶກສາສັງກັດຫ້ອງການສຶກສາທິການ ແລະ ກິລາ

ເມືອງ ຈັນທະບູລີ. ມະຫາວິທະຍາໄລ ຣັຕນະປະເທດໄທ. ກອນວິພາ ໄມຕຣີແພນ (ປີ2008:ບົດຄັດຫຍໍ້)ໄດ້ສຶກສາຮູບແບບການພັດທະນາທ່າແຮງຂອງບຸກຄະລາກອນທາງວິຊາການເພື່ອເຂົ້າຕໍ່າແໜ່ງທາງວິຊາການແບບມີສ່ວນຮ່ວມ. ຄະນະມະນຸດສາດແລະສັງຄົມສາດ ມະຫາວິທະຍາໄລມະຫາສາລະຄາມ.

ກົດໝາຍວ່າດ້ວຍການສຶກສາ(ປີ2016) ຄູ ແລະ ບຸກຄະລານກອນການສຶກສາ(ໝວດທີ1ໜ້າທີ24-25) ນະຄອນຫລວງວຽງຈັນ: ກົມຈັດຕັ້ງ ແລະ ພະນັກງານ.ຂໍ້ກຳນົດ 4 ບຸທະລຸຂອງຂະແໜງການສຶກສາ ແລະ ກິລາລາວສະບັບເລກທີ 855ຫ/ສສກ(ປີ2013)ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ.

ຂໍ້ຕົກລົງຂອງລັດຖະມົນຕີ (ປີ2013)ວ່າດ້ວຍການນຳໃຊ້ເອກະສານ3ຫລັກສະນະແລະ5 ຫລັກມູນການສຶກສາລາວ. ນະຄອນຫລວງວຽງຈັນ.

ຄຣິສດາ ວັດທະນາສັກ(ປີ2018:ບົຄັດຫຍໍ້)ໄດ້ສຶກສາປັດໄຈທີ່ສົ່ງຕໍ່ຄວາສຳເລັດໃນການຂໍຕຳແໜ່ງທາງວິຊາການຂອງອາຈານ ມະຫາວິທະຍາໄລເອກະຊົນ.ຄູ່ມືຄົ້ນຄວ້າຕຳແໜ່ງວິຊາການຄູສາຍສາມັນສຶກສາ(ສະບັບປັບປຸງ)ປີ2019:ກົມສາມັນສຶກສາ.ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ.

ຄູ່ມືແນະນຳການປະເມີນຜົນການປະຕິບັດໜ້າທີ່ວຽກງານຂອງພະນັກງານລັດຖະກອນຄູ (ປີ2017) ນະໂຍບາຍເງິນເດືອນ ແລະ ສະຫວັດດີການ. ນະຄອນຫລວງວຽງຈັນ: ກົມຈັດຕັ້ງ ແລະ ພະນັກງານ.

ຈັນທະນັນ ຈາຣຸໂປທຳ ແລະ ສັນຍາຊຸນພູມ(ປີ2015: ບົດຄັດຫຍໍ້)ໄດ້ສຶກສາປັດທີ່ມີອິດທິພົນຕໍ່ການເຂົ້າສູ່ຕຳແໜ່ງທາງວິຊາການຂອງບຸກຄະລາກອນສາຍວິຊາການມະຫາວິທະຍາໄລ ລັດຕະນະ ມະຫາສາລະຄາມ.

ສຸນິສາ ກົງພົງ (ປີ2013:ບົດຄັດຫຍໍ້)ໄດ້ສຶກສາຄວາມຕ້ອງການພັດທະນາຕົນເອງ ຂອງບຸກຄະລາກອນສາຍປະຕິບັດການ ຄະນະເສດຖະສາດ ແລະ ການບັນຊີ ມະຫາວິທະຍາໄລຈຸລາລົງກອນສຸລິຍາ ສີລີຈັນທອນ(ປີ2013: ບົດຄັດຫຍໍ້)ໄດ້ສຶກສາປັດໄຈແຮງຈູງໃຈທີ່ຜົນທົບຕໍ່ຄວາມເປັນຄູມືອາຊີບຂອງຄູສອນໃນສະຖາບັນການສຶກສາຂັ້ນພື້ນຖານຊັ້ນປະຖົມສຶກສາ, ສັງກັດຫ້ອງການສຶກສາທິການເມືອງຈັນທະບູລີ.

ສຸວັນ ພົມເຂດ (ປີ2015: ບົດຄັດຫຍໍ້)ໄດ້ສຶກສາແຮງຈູງໃຈໃນການພັດທະນາຕົນເອງດ້ານການຄົ້ນຄວ້າວິໄຈຂອງບຸກຄະລາກອນສາຍວິຊາການມະຫາວິທະຍາໄລເຕັກໂນໂລຊີ ລາດຊະມົງຄົນສີວິໄຊ .

ສົມຈິດ ດວງຈັນ (ປີ2017: ບົດຄັດຫຍໍ້ )ໄດ້ສຶກສາການບໍລິຫານການເຂົ້າສູ່ຕຳແໜ່ງ ທາງວິຊາການຂອງມະຫາວິທະຍາໄລ ລາດຊະພັດພະນະຄອນ ສຳນັກງານເລຂາທິການສະພາການສຶກສາ

ກະຊວງສຶກສາທິການ ແລະ ກິລາໄທ (2017ໜ້າ 6-7) ຂອບວຸດທິການສຶກສາແຫ່ງຊາດ. ກຸງເທບມະຫານະຄອນ: sweet chili Grahihie co ltd ຊົນຈັນສະນິດ.

ຍຸດທະສາດການພັດທະນາຊັບພະຍາກອນມະນຸດຮອດປີ2025(2016ໜ້າ14)ວິໃສທັດຮອດປີ2030-ເປົ້າໝາຍລວມຂອງການພັດທະນາຊັບພະຍາກອນມະນຸດ.ນະຄອນຫລວງວຽງຈັນ.

ດຳລັດວ່າດ້ວຍຕຳແໜ່ງບໍລິຫານຂອງພະນັກງານລັດຖະກອນສະບັບເລກທີ203/ລບ(ປີ2017) ໄດ້ກຳນົດມາດຕະຖານຕຳແໜ່ງວິຊາການຂອງ

ລັດຖະກອນບໍລິຫານ. ນະຄອນຫລວງວຽງຈັນ.

ດຳລັດວ່າດ້ວຍລັດຖະກອນຄູສະບັບທີ177/ລບ.(ປີ2012).ນະໂຍບາຍ,ເງິນເດືອນ ແລະ ສະຫວັດດີການ. ນະຄອນຫລວງວຽງຈັນ: ສຳນັກງານນາຍຍົກລັດຖະມົນຕີແຫ່.

ດຳລັດວ່າຂອບວຸດທິການສຶກສາແຫ່ງຊາດລາ (2021ໜ້າ2-4)ຂອບວຸດທິການສຶກສາແຫ່ງຊາດ.ດຳລັດວ່າດ້ວຍຕຳແໜ່ງວິຊາການຂອງລັດຖະກອນສາທາລະນະລັດປະຊາທິປະໄຕປະຊາຊົນລາວສະບັບເລກທີ 202/ລບ(2017 ໜ້າ1)ມາດຕະຖານຂອງຕຳແໜ່ງວິຊາການຂອງລັດຖະກອນ. ນະຄອນຫລວງວຽຈັນ.

ດຳລັດວ່າດ້ວຍຕຳແໜ່ງວິຊາການຄູໃນລະດັບຕ່ຳກວ່າສະຖາບັນການສຶກສາຊັ້ນສູງເລກທີ209/ບລ(ປີ2007)ມາດຕະຖານຕຳແໜ່ງວິຊາການຄູ. ນະຄອນຫລວງວຽງຈັນ:ສຳນັກງານນາຍົກລັດຖະມົນຕີ.

ດຳລັດວ່າດ້ວຍຕຳແໜ່ງວິຊາການຄູໃນລະດັບຕຳກວ່າສະບັນການສຶກສາຊັ້ນສູງ.(2007ໜ້າ4-6) ຄຸນສົມບັດຂອງຂອງຜູ້ທີ່ຈະເຂົ້າເປັຕຳແໜ່ງວິຊາການຄູ. ນະຄອນຫລວງວຽຈັນ: ກົມຈັດຕັ້ງ ແລະ ພະນັກງານ.

ສະຫວັດ ທິດາພາ ທອງໄຊ (ປີ2019:ບົດຄັດຫຍໍ້)ໄດ້ສຶກສາປັດໄຈທີ່ສົ່ງຜົນກະທົບຕໍ່ການເຂົ້າ ຣາຊະມົງຄຸນທານາບູລີ ປະເທດໄທ.ສະຫວັດ ທິດາພາ ທອງໄຊ(ປີ2019: ບົດຄັດຫຍໍ້)ໄດ້ສຶກສາປັດໄຈທີ່ສົ່ງຜົນກະທົບຕໍ່ການເຂົ້າຮັບຕຳແໜ່ງວິຊາການຂອງພະນັກງານ ວິຊາການ ມະຫາວິທະຍາໄລ ເຕັກໂນໂລຢີ ຣາຊະມົງຄົນທານີບູລີ

ບົດແນະນຳກົມຈັດຕັ້ງແລະພະນັກງານສະບັບເລກທີ37/ສສກ(ປີ2013)ຂໍ້ກຳນົດ ແລະຕົວຊີບອກຂອງ 3 ຂໍ້ແຂ່ງຂັນ. ນະຄອນຫລວງວຽງຈັນ. ປວິລັດ ສີງຄຳໄພວັນ(ປີ2014:ບົດຄັດຫຍໍ້)ສຶກສາແຮງຈູງໃຈທີ່ມີຜົນຕໍ່ປະສິດທິພາບໃນການເຮັດວຽກຂອງບຸກຄະລາກອນ.

ປະພິສິດ ກຸນບຸດ (ປີ2013:ບັດຄັດຫຍໍ້)ສຶກສາປັດໄຈທີ່ສົ່ງຜົນຕໍ່ການພັດທະນາຕົນເອງ ຕາມຈັນຍາບັນວິຊາຊີບຄູໃນໂຮງຮຽນສັງກັດສຳນັກງານບໍລິຫານງານ ຄະນະກຳມະການສົ່ງເສີມການສຶກສາເອກະຊົນ ຈັງຫວັດສິງຂາ

ປານິທີ ອຳພອນພັນນາລັດ(ປີ2015:ບົດຄັດຫຍໍ້)ໄດ້ສຶກສາປັດໄຈທີ່ສົ່ງຕໍ່ຄວາມພ້ອມການປ່ຽນແປງຂອງບຸກຄະລາ.

ປາຣິຊາດ ສຣະທອງທ່ວມ (ປີ2017: ບົດຄັດຫຍໍ້)ໄດ້ ສຶກສາການພັດທະນາຕົນເອງຂອງພະນັກງານສາຍສະໜັບສະໜູນວິຊາການ ຂອງມະຫາວິທະຍາໄລສິລະປາກອນ

ພຣະມະຫາຄມະທິບ ຈັນສະງ່າ(ປີ2018:ບົດຄັດຫຍໍ້) ປັດໄຈທີ່ສົ່ງຕໍ່ການປະຕິບັດໜ້າທີ່ຂອງພະນັກງານລັດຖະກອນຫ້ອງວ່າການ ເມືອງສຳພັນທະວົງກຸງເທບມະຫານະຄອນ.ກຸງເທບມະຫານະຄອນ:ມະຫາວິທະຍາໄງສະຽາມ.

ພອນດິດົງໃຫຍ່(ປີ2019:ບົດຄັດຫຍໍ້)ໄດ້ສຶກສາປັດໄຈທີ່ສຳພັນກັບແຮງຈູງໃຈໃນການເຂົ້າສູ່ຕຳແໜ່ງຜູ່ບໍລິຫານສະຖານການສຶກສາສັງກັດສຳນັກງານຄະນະກຳມະການອາຊີວະສຶກສາ ພາກຕາເວັນອອກສ່ຽງເໜືອ ລັດຖະບານແຫ່ງສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ (ປີ2007ໜ້າ 8)ດຳລັດວ່າດ້ວຍຕຳແໜ່ງວິຊາການຄູໃນລະດັບຕຳກວ່າສະຖາບັນການສຶກສາຊັ້ໜສູງ.ນະຄອນຫລວງວຽງຈັນ: ສຳນັກງານນາຍລັດຖະມົນຕີ.

ວິໄສທັດຮອດ ປີ2030ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ 5 ປີ ຄັ້ງທີ VIII (2021-2025 ຫນ້າ 9)ວິໄສທັດ ຮອດປີ 2030 ແລະ ຍຸດທະສາດນອດປີ 2025. ນະຄອນຫລວງວຽງຈັນ: ກະຊວງສຶກ ສາທິການ ແລະ ກິ

ແຜນພັດທະນາຂະແໜງການສຶກສາ5ປີ ຄັ້ງທີ IX (2021-0205)(ປີ2020ໜ້າ147). ຂະແໜງການຍ່ອຍຂອງການສຶກສາຄູ. ນະຄອນຫລວງວຽງຈັນ: ກະຊວງສຶກສາທິ ການ ແລະ ກິລາ.

ໂສມຈະເລີນ(ປີ2014:ບົດຄັດຫຍໍ້)ສຶກສາຮູບແບບການ ພັດທະນາອາຈານເພື່ອເຂົ້າສູ່ຕຳແໜ່ງທາງວິຊ ການໃນມະຫາວິທະຍາໄລເອກະຊົນ .

ຕາຕະລາງປະຊາກອນ ແລະ ກຸ່ມຕົວຢ່າງ

| ລ/ດ | ຄູສອນໂຮງຮຽນມັດທະຍົມສົມບູນແຂວງ ຈຳປາສັກ | ປະຊາກອນ | ກຸ່ມຕົວຢ່າງ |
|---|---|---|---|
| 1 | ນະຄອນປາກເຊ | 502 | 70 |
| 2 | ເມືອງ ຊະນະສົມບູນ | 248 | 34 |
| 3 | ເມືອງ ບາຈຽງຈະເລີນສຸກ | 303 | 42 |
| 4 | ເມືອງ ປາກຊ່ອງ | 233 | 32 |
| 5 | ເມືອງ ປະທຸມພອນ | 204 | 28 |
| 6 | ເມືອງ ໂພນທອງ | 311 | 43 |
| 7 | ເມືອງ ຈຳປາສັກ | 172 | 24 |
| 8 | ເມືອງ ສຸຂຸມາ | 130 | 18 |
| 9 | ເມືອງ ມູນລະປາໂມກ | 147 | 21 |
| 10 | ເມືອງ ໂຂງ | 231 | 32 |
| | ລວມ | 2.481 | 344 |